**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ

ຄະນະວິຊາການຊ່ວຍວຽກສາມສ້າງກະຊວງ

# ຫົວບົດທີ 5

# ເຜີຍແຜ່ຄຳສັ່ງຂອງລັດຖະມົນຕີວ່າການ ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫລວງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ ເລກທີ: 00469 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ: 29 / 4 / 2013

# ຄຳສັ່ງ
## ຂອງລັດຖະມົນຕີວ່າການ
## ວ່າດ້ວຍການຄຸ້ມຄອງເຂດສະຫງວນຂອງທາງຫລວງ

ເຖິງ: - ຫົວໜ້າກົມຂົວທາງ;
- ຫົວໜ້າກົມເຄຫາ-ຜັງເມືອງ;
- ຫົວໜ້າສະຖາບັນໂຍທາ ແລະຂົນສົ່ງ;
- ຫົວໜ້າພະແນກ ຍທຂ ບັນດາແຂວງ ແລະນະຄອນຫລວງ;
- ຫົວໜ້າຫ້ອງການ ຍທຂ ເມືອງໃນທົ່ວປະເທດ;

- ອີງຕາມກົດໝາຍວ່າດ້ວຍທາງຫລວງ, ສະບັບເລກທີ 04/99/ສພຊ, ລົງວັນທີ 3/4/1999.
- ອີງຕາມກົດໝາຍວ່າດ້ວຍຜັງເມືອງ, ສະບັບເລກທີ 03/99/ສພຊ, ລົງວັນທີ 03/04/1999.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງ ຍທຂ, ສະບັບເລກທີ 17179/ຍທຂ, ລົງວັນທີ 28/12/2009 ວ່າດ້ວຍການປົກປັກຮັກສາ ແລະບູລະນະຮັກສາທາງຫລວງ.
- ອີງຕາມບົດບັນທຶກກອງປະຊຸມຄະນະນຳກະຊວງ ຄັ້ງວັນທີ 7/3/2013.

ໃນໄລຍະຜ່ານມາ, ໄດ້ມີການລະເມີດລະບຽບກົດໝາຍກ່ຽວກັບທາງຫລວງ ແລະລະບຽບກົດໝາຍກ່ຽວກັບຜັງເມືອງຢ່າງຫລວງຫລາຍໃນຂອບເຂດທົ່ວປະເທດ ເປັນຕົ້ນ ແມ່ນການກໍ່ສ້າງກິດຈະການຕ່າງໆທີ່ບຸກລຸກຂອບເຂດສະຫງວນຂອງທາງ ແລະທີ່ດິນຜັງເມືອງເຊັ່ນ: ການຕິດຕັ້ງເສົາໄຟຟ້າ, ເສົາໂທລະສັບ, ສາຍກາບໂທລະສັບ, ສາຍໂທລະພາບ, ປ້າຍໂຄສະນາ, ທໍ່ນ້ຳປະປາ, ການອອກໃບຕາດິນກວມເອົາຂອບເຂດສະຫງວນຂອງທາງ ແລະອື່ນໆ.

ດັ່ງນັ້ນ, ເພື່ອເພີ່ມທະວີຄວາມເປັນເຈົ້າການ ໃນການປົກປັກຮັກສາເຂດສະຫງວນຂອງທາງຫລວງປະເພດຕ່າງໆ ແລະການນຳໃຊ້ທີ່ດິນຜັງເມືອງ ໃຫ້ສອດຄ່ອງກັບລະບຽບກົດໝາຍຢ່າງເຂັ້ມງວດ ແລະມີຜົນສັກສິດ,

### ລັດຖະມົນຕີວ່າການ ອອກຄຳສັ່ງ:

1. ໃຫ້ກົມຂົວທາງ, ກົມເຄຫາ-ຜັງເມືອງ, ສະຖາບັນ ຍທຂ, ພະແນກ ຍທຂ ບັນດາແຂວງ, ນະຄອນຫລວງ ແລະຫ້ອງການ ຍທຂ ບັນດາເມືອງໃນທົ່ວປະເທດ ເປັນເຈົ້າການກວດກາຄືນການກຳນົດ

ມາດຕະຖານທີ່ຕິດພັນກັບການປົກປັກຮັກສາ ເຂດສະຫງວນຂອງທາງຫລວງປະເພດຕ່າງໆຢ່າງເຂັ້ມງວດ ຄື:

1.1. ເສັ້ນທາງຫລວງແຫ່ງຊາດ ກວ້າງເບື້ອງລະ 25 ແມັດ ນັບແຕ່ໃຈກາງທາງອອກໄປ.

1.2. ເສັ້ນທາງຫລວງແຂວງ ກວ້າງເບື້ອງລະ 15 ແມັດ ນັບແຕ່ໃຈກາງທາງອອກໄປ.

1.3. ເສັ້ນທາງຫລວງເມືອງ ກວ້າງເບື້ອງລະ 10 ແມັດ ນັບແຕ່ໃຈກາງທາງອອກໄປ.

1.4. ເສັ້ນທາງຊົນນະບົດ ກວ້າງເບື້ອງລະ 5 ແມັດ ນັບແຕ່ໃຈກາງທາງອອກໄປ.

1.5. ເສັ້ນທາງເທດສະບານ ແມ່ນໃຫ້ປະຕິບັດຕາມລະບຽບແຜນຜັງເມືອງ.

1.6. ເສັ້ນທາງສະເພາະ ແມ່ນໃຫ້ປະຕິບັດຕາມມາດຕະຖານເຕັກນິກສະເພາະແຕ່ລະເສັ້ນທາງ.

2. ໃຫ້ກົມເຄຫາ-ຜັງເມືອງ ແລະສະຖາບັນ ຍທຂ ສົມທົບກັບອົງການປົກຄອງນະຄອນຫລວງ, ແຂວງ, ເມືອງ, ພະແນກ ຍທຂ ແຂວງ/ນະຄອນຫລວງ ແລະຫ້ອງການ ຍທຂ ເມືອງ ຄົ້ນຄວ້າການດັດແກ້ການວາງແຜນຈັດຕັ້ງຖິ່ນຖານ ຫລືພູມລຳເນົາ ແລະແຜນຜັງບ້ານຄືນໃໝ່, ໂດຍບໍ່ໃຫ້ແຕ່ລະຫລັງຄາເຮືອນພາຍໃນບ້ານສ້າງທາງ ແລະວາງທໍ່ລະບາຍນ້ຳເຊື່ອມຕິດໃສ່ກັບທາງຫລວງໂດຍກົງ, ແຕ່ໃຫ້ແຕ່ລະບ້ານ ສ້າງເສັ້ນທາງເຂົ້າ-ອອກຕ່າງຫາກເພື່ອເຊື່ອມກັບທາງຫລວງ ແລ້ວໃຫ້ແຕ່ລະຫລັງຄາເຮືອນ ມານຳໃຊ້ເສັ້ນທາງເຂົ້າ-ອອກລວມຂອງບ້ານນັ້ນເພື່ອອອກສູ່ທາງຫລວງ, ໃນຕໍ່ໜ້າການສ້າງບ້ານໃໝ່ ຕ້ອງໃຫ້ຢູ່ນອກຂອບເຂດສະຫງວນຂອງທາງຫລວງ.

3. ໃຫ້ພະແນກ ຍທຂ ແຂວງ, ນະຄອນຫລວງ ແລະຫ້ອງການ ຍທຂ ເມືອງ ໃນທົ່ວປະເທດດຳເນີນການບາງວຽກງານຮີບດ່ວນດັ່ງລຸ່ມນີ້:

3.1. ແຈ້ງການໄປຍັງທຸກພາກສ່ວນທີ່ໄດ້ກໍ່ສ້າງກິດຈະການຂອງຕົນ ຢູ່ໃນຂອບເຂດສະຫງວນຂອງທາງຫລວງໃນໄລຍະຜ່ານມາ (ບັນດາກິດຈະການດັ່ງທີ່ໄດ້ກ່າວມາຂ້າງເທິງ) ໃຫ້ຊາບວ່າ: ການກໍ່ສ້າງບັນດາກິດຈະການດັ່ງກ່າວ ເປັນການລະເມີດລະບຽບກົດໝາຍກ່ຽວກັບທາງຫລວງ ແລະລະບຽບກົດໝາຍກ່ຽວກັບຜັງເມືອງ ແລະເຕືອນໃຫ້ພາກສ່ວນດັ່ງກ່າວ ຍົກຍ້າຍກິດຈະການກໍ່ສ້າງນັ້ນ ອອກຈາກຂອບເຂດສະຫງວນຂອງທາງ ໃນກຳນົດເວລາອັນເໝາະສົມ.

3.2. ແຈ້ງການໄປຍັງທຸກພາກສ່ວນໃຫ້ຊາບວ່າ ໃນຕໍ່ໜ້າ ກິດຈະການກໍ່ສ້າງທຸກປະເພດຂອງພາກສ່ວນຕ່າງໆ ທີ່ຈະດຳເນີນການກໍ່ສ້າງຕາມເສັ້ນທາງຫລວງ ຕ້ອງໃຫ້ຢູ່ນອກຂອບເຂດສະຫງວນຂອງທາງ, ແຕ່ໃນກໍລະນີທີ່ມີຄວາມຈຳເປັນ ເນື່ອງຈາກສະພາບພູມີປະເທດບໍ່ອຳນວຍ ເຊັ່ນ: ຢູ່ເຂດພູດອຍນັ້ນ ຕ້ອງໄດ້ຮັບການອະນຸຍາດຢ່າງເປັນລາຍລັກອັກສອນ ຈາກພະແນກ ຍທຂ ແຂວງ ແລະນະຄອນຫລວງສາກ່ອນ ແລະຫ້າມບໍ່ໃຫ້ການກໍ່ສ້າງນັ້ນແຕະຕ້ອງໂຄງສ້າງ ແລະສິ່ງປະກອບຂອງເສັ້ນທາງເຊັ່ນ: ໜ້າທາງ, ບ່າທາງ, ລະບົບລະບາຍນ້ຳແຄມທາງ, ຫລັກໝາຍ, ປ້າຍຈະລາຈອນ, ຮົ້ວກັ້ນແຄມທາງ ແລະໂຄງປະກອບອື່ນໆຂອງທາງຫລວງ. ພາກສ່ວນທີ່ເປັນເຈົ້າຂອງໂຄງການ ຫລືກິດຈະການກໍ່ສ້າງດັ່ງກ່າວ ຕ້ອງຢັ້ງຢືນເປັນລາຍລັກອັກສອນວ່າ ຈະຮັບຜິດຊອບຕໍ່ຄ່າໃຊ້ຈ່າຍທັງໝົດ ໃນການຍົກຍ້າຍສິ່ງກໍ່ສ້າງຂອງຕົນອອກຈາກຂອບເຂດສະຫງວນຂອງທາງ ໃນທຸກເມື່ອທີ່ມີໂຄງການປັບປຸງ, ກໍ່ສ້າງ ຫລືຂະຫຍາຍທາງຫລວງ.

3.3. ກວດກາການລະເມີດເຂດສະຫງວນຂອງທາງຫລວງ, ຖ້າຫາກເຫັນວ່າມີການລະເມີດ ໃຫ້ປະສານອຳນາດການປົກຄອງທ້ອງຖິ່ນ ແລະເຈົ້າໜ້າທີ່ທີ່ກ່ຽວຂ້ອງ ດຳເນີນການແກ້ໄຂໂດຍໄວ ແລະຂາດຕົວ.

3.4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເປັນຕົ້ນ: ພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ, ນະຄອນຫລວງ ແລະຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງ (ໜ່ວຍງານຄຸ້ມຄອງທີ່ດິນ) ເພື່ອບໍ່ໃຫ້ມີການອອກໃບຕາດິນ ກວມເອົາຂອບເຂດສະຫງວນຂອງທາງຫລວງ.

3.5. ປະສານສົມທົບກັບອົງການປົກຄອງບ້ານ ເພື່ອຂໍຄວາມຮ່ວມມື ໃນການເຜີຍແຜ່ລະບຽບກົດໝາຍກ່ຽວກັບທາງຫລວງ ແລະລະບຽບກົດໝາຍກ່ຽວກັບຜັງເມືອງ ພ້ອມທັງປຸກລະດົມປະຊາຊົນປະກອບສ່ວນເຂົ້າໃນວຽກງານປົກປັກຮັກສາ ແລະບູລະນະທາງຫລວງ.

4. ໃຫ້ບັນດາຫົວໜ້າໂຄງການກໍ່ສ້າງ, ຂະຫຍາຍ ແລະປັບປຸງເສັ້ນທາງໃໝ່ໃນຕໍ່ໜ້າ ດຳເນີນການຕິດຕັ້ງຫລັກໝາຍເຂດສະຫງວນຂອງທາງຫລວງ ທີ່ເຮັດດ້ວຍເບຕົງເສີມເຫລັກໃນໄລຍະທຸກໆ 200 ແມັດ ຂອງສອງຟາກທາງ ໂດຍໃຫ້ກຳນົດລະອຽດຢູ່ໃນແຜ່ນແຕ້ມ ແລະເອົາເຂົ້າໃນແຜນການລວມຂອງໂຄງການຕົນ.

5. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

6. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ

**<u>ສຳເນົານຳສົ່ງ:</u>**

| | |
|---|---|
| - ຫ້ອງວ່າການລັດຖະບານ | 01 ສະບັບ ເພື່ອລາຍງານ |
| - ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ | 01 ສະບັບ ເພື່ອປະສານສົມທົບ |
| - ຫ້ອງວ່າການບັນດາແຂວງ ແລະນະຄອນຫລວງ ບ່ອນລະ | 01 ສະບັບ ເພື່ອປະສານສົມທົບ |
| - ຫ້ອງວ່າການປົກຄອງເມືອງ ບ່ອນລະ | 01 ສະບັບ ເພື່ອປະສານສົມທົບ |
| - ກົມຂົວທາງ, ເຄຫາ-ຜັງເມືອງ, ສະຖາບັນ ຍທຂ ບ່ອນລະ | 01 ສະບັບ ເພື່ອຈັດຕັ້ງປະຕິບັດ |
| - ພະແນກ ຍທຂ ບັນດາແຂວງ/ນະຄອນຫລວງ ບ່ອນລະ | 01 ສະບັບ ເພື່ອຈັດຕັ້ງປະຕິບັດ |
| - ຫ້ອງການ ຍທຂ ບັນດາເມືອງ ບ່ອນລະ | 01 ສະບັບ ເພື່ອຈັດຕັ້ງປະຕິບັດ |
| - ສຳເນົາເກັບມ້ຽນ | 02 ສະບັບ |